# ຂ່າວ

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານລົງທຶນ ແລະ ພັດທະນາຫວຽດນາມ ສືບຕໍ່ການຮ່ວມມືຮອບດ້ານໄລຍະ 2017-2020

ໃນວັນທີ 20 ກັນຍາ 2017, ຄະນະນໍາຈາກທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ໂດຍທ່ານ ພູຂົງ ຈັນທະຈັກ ຜູ້ອໍານວຍການໃຫຍ່ BCEL ເປັນຫົວໜ້າຄະນະ ໄດ້ຢ້ຽມຢາມ ແລະ ເຮັດວຽກກັບຄະນະນໍາຂອງທະນາຄານລົງທຶນ ແລະ ພັດທະນາຫວຽດນາມ (BIDV) ໂດຍ ທ່ານ ຟານດຶກຕູ ຜູ້ອໍານວຍການໃຫຍ່ BIDV ພ້ອມດ້ວຍຄະນະຕ້ອນຮັບທີ່ຫ້ອງປະຊຸມ ຊັ້ນ 22 ຕຶກສໍານັກງານໃຫຍ່ BIDV, ຮ່າໂນ້ຍ ສສ ຫວຽດນາມ




2 ຝ່າຍໄດ້ຕີລາຄາສູງໃນການຮ່ວມມື ຊ່ວຍເຫຼືອກັນໄລຍະຜ່ານມາ ແລະ ໄດ້ຮ່ວມເຊັນ MOU ໃນການພົວພັນຮ່ວມມືຮອບດ້ານໃນໄລຍະ 2017-2020, ທັງ 2 ຝ່າຍຈະສືບຕໍ່ການຮ່ວມມືກັນໃນຫຼາຍດ້ານເຊັ່ນ: ຮ່ວມມືດ້ານທຸລະກິດ, ການກໍ່ສ້າງພະນັກງານ, ແລກປ່ຽນປະສົບການດ້ານວຽກງານເຊິ່ງກັນແລະກັນ ແລະ ຮ່ວມມືກັນໃນການຊຸກຍູ້ທຸລະກິດຂອງບໍລິສັດລູກທີ່ 2 ຝ່າຍຮ່ວມກັນສ້າງ: ທະນາຄານຮ່ວມທຸລະກິດລາວຫວຽດ ແລະ ບໍລິສັດຮ່ວມທຸລະກິດປະກັນໄພລາວຫວຽດ.

ຜູ້ເຂົ້າຮ່ວມເປັນສັກຂີພະຍານໃນພິທີມີ:

1. ທ່ານ ໂງວັນຢຸງ, ສະມາຊິກສະພາບໍລິຫານ BIDV,
2. ທ່ານ ເຈິ້ນລຸກລ່າງ, ຮອງຜູ້ອຳນວຍການ BIDV,
3. ທ່ານ ພັນຊະນະ ຄຸນນຸວົງ, ຮອງຜູ້ອຳນວຍການ BCEL,
   ພ້ອມດ້ວຍຄະນະພະແນກການທີ່ກ່ຽວຂ້ອງຈາກ 2 ຝ່າຍ.




BCEL ແລະ BIDV ໄດ້ເລີ່ມຕົ້ນໃນການຮ່ວມມືກັນສ້າງຕັ້ງ ທະນາຄານຮ່ວມທຸລະກິດລາວຫວຽດໃນປີ 1999 ແລະ ຮ່ວມມືກັນໃນການສ້າງຕັ້ງບໍລິສັດຮ່ວມທຸລະກິດລາວຫວຽດໃນປີ 2006, ເຊິ່ງ 2 ບໍລິສັດດັ່ງກ່າວກໍ່ໄດ້ປະກອບສ່ວນໃນການພັດທະນາສັງຄົມລາວຫຼາຍດ້ານ ໄດ້ຮັບການຕີລາຄາສູງຈາກລັດຖະບານ 2 ປະເທດ ແລະ ກາຍເປັນສັນຍາລັກແຫ່ງການພົວພັນຂອງ 2 ຊາດລາວຫວຽດນາມ.

ການສືບຕໍ່ຮ່ວມມືລະຫວ່າງ BCEL ແລະ BIDV ເປັນການປະກອບສ່ວນໃນການສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ 2 ປະເທດ, ປະກອບສ່ວນໃນສະເຫຼີມສະຫຼອງ 2 ວັນປະຫວັດສາດລະຫວ່າງ ລາວ-ຫວຽດນາມຄື ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມຄົບຮອບ 55 ປີ (05/09/1962 -05/09/2017) ແລະ ວັນເຊັນສົນທິສັນຍາ ແລະ ການຮ່ວມມືລາວ-ຫວຽດນາມຄົບຮອບ 40 ປີ (18/07/1977-18/07/2017)